## ໄດ້ຮັບການຊ່ວຍຜ່ານບຸກຄົນໂດຍຜ່ານໜຶ່ງໃນທີ່ຕັ້ງດັ່ງຕໍ່ໄປນີ້:

**ສູນການແພດ Dartmouth Hitchcock (Dartmouth Hitchcock Medical Center)**
ບໍລິການທາງດ້ານການເງິນແກ່ຄົນເຈັບ/ຂັບສົ່ງ
ສູນການຢາ
Lebanon, NH 03756

**Dartmouth Hitchcock Clinics Concord**
ທີ່ປຶກສາດ້ານການເງິນ
253 Pleasant Street
Concord, NH 03301

**Dartmouth Hitchcock Clinics Manchester**
ຜູ້ໃຫ້ຄໍາປຶກສາດ້ານການເງິນ
100 Hitchcock Way
Manchester, NH 03104

**ຄລີນິກ Dartmouth-Hitchcock Clinic**
ຜູ້ໃຫ້ຄໍາປຶກສາດ້ານການເງິນ
2300 Southwood Drive
Nashua, NH 03063

**ໂຮງໝໍ Alice Peck Day Memorial Hospital**
ການລົງທະບຽນ/ຜູ້ໃຫ້ຄໍາປຶກສາດ້ານການເງິນ
10 Alice Peck Day Drive
Lebanon, NH 03766

**ສູນການແພດ Cheshire**
ການລົງທະບຽນ/ລອບບິລວມແຄດເຊຍ
580 Court Street
Keene, NH 03431

**New London Hospital**
ຜູ້ໃຫ້ຄໍາປຶກສາດ້ານການເງິນ/ຝ່າຍຕ້ອນຮັບ
273 County Road
New London, NH 03257

## ໂທຫາໜຶ່ງໃນຈໍານວນຄົນເຂັບຂອງພວກເຮົາເພື່ອໃຫ້ການຊ່ວຍເຫຼືອໄດ້ນະທີເປີ:

**(844) 647-6436**

## ກະລຸນາຍື່ນໃບສະໝັກສະບັບສົມບູນໄປຍັງ:

**ສູນການແພດ Dartmouth Hitchcock Medical Center**
ຮຽນທ່ານ: PFS - ລະດັບL 3 – FAA
ສູນການແພດໜຶ່ງດຽວ
Lebanon, NH 03756-0001

**ສູນການແພດ Cheshire Medical Center**
ຮຽນທ່ານ: PFS – FAA
580 Court Street
Keene, NH 03431

**ໂຮງໝໍ New London Hospital**
ຮຽນທ່ານ: ຜູ້ໃຫ້ຄໍາປຶກສາດ້ານການເງິນ
273 County Road
New London, NH 03257

Dartmouth Health

dartmouth-hitchcock.org/patients-visitors/financial-assistance

202205-82

Dartmouth Health

# ນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ



# ທ່ານຕ້ອງການຄວາມຊ່ວຍເຫຼືອເພື່ອຈ່າຍຄ່າບິນສຸກເສີນ ຫຼື ການດູແລທີ່ຈຳເປັນທາງການແພດຢູ່ສະຖານທີ່ປິ່ນປົວສຸຂະພາບ Dartmouth ບໍ?

## ທ່ານອາດໄດ້ສິດໃນການຮັບການຊ່ວຍເຫຼືອດ້ານການເງິນ.

Dartmouth Health ສະໜອງການດູແລໂດຍບໍ່ເສຍຄ່າ ຫຼື ສ່ວນຫຼຸດເພື່ອການກຸສົນສຳລັບກໍລະນີສຸກເສີນ ຫຼື ການບໍລິການທີ່ຈຳເປັນທາງການແພດອື່ນໆທີ່ສະໜອງໃຫ້ຄົນເຈັບຜູ້ທີ່ມີເງື່ອນໄຂ. ຄົນເຈັບຜູ້ທີ່ຖືກພິຈາລະນາວ່າເປັນຜູ້ມີສິດໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນອາດຈະບໍ່ຕ້ອງຈ່າຍຄ່າທຳນຽມເພີ່ມເຕີມສຳລັບກໍລະນີສຸກເສີນ ຫຼື ການດູແລທາງການແພດອື່ນໆທີ່ມີຄວາມຈຳເປັນເກີນກ່ວາຈຳນວນທີ່ອອກມາໃນໃບບິນໃຫ້ຄົນເຈັບທີ່ມີປະກັນໄພດູແລດຽວກັນ.

## ນະໂຍບາຍດ້ານການເງິນ

Dartmouth Health ສະໜອງການດູແລສຳລັບເງື່ອນໄຂທາງການແພດສຸກເສີນແລະການບໍລິການທີ່ຈຳເປັນທາງການແພດແກ່ບຸກຄົນໂດຍບໍ່ຄຳນຶງເຖິງຄວາມສາມາດໃນການຈ່າຍຂອງເຂົາເຈົ້າ, ການມີສິດໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນຫຼືລັດຖະບານ, ອາຍຸ, ເພດ, ເຊື້ອຊາດ, ສະຖານະພາບການເຂົ້າເມືອງ, ທັດສະນະທາງເພດຫຼືຄວາມກ່ຽວຂ້ອງທາງສາສະໜາ. ພວກເຮົາໃຫ້ການຊ່ວຍເຫຼືອທາງດ້ານການເງິນແກ່ບຸກຄົນຜູ້ທີ່ (i) ອາໄສຢູ່ໃນລັດ New Hampshire ຫຼື Vermont, ຫຼື ຜູ້ທີ່ບໍ່ຢູ່ອາໄສທີ່ປະສົບກັບພາວະສຸກເສີນທາງການແພດໃນຂະນະທີ່ຢູ່ໃນບໍລິເວນອານາເຂດລັດ; ບໍ່ມີປະກັນໄພ ຫຼື ຜູ້ທີ່ມີປະກັນສຸຂະພາບ ແຕ່ຕ້ອງການການຊ່ວຍເຫຼືອດ້ານການເງິນ ເພື່ອຊ່ວຍຄ່າປິ່ນປົວທີ່ຕ້ອງຄ້ອດກະເປົາ ເຊັ່ນ: ເງິນທີ່ຫັກອອກ, ຄ່າໃຊ້ຈ່າຍຮ່ວມ ແລະ ປະກັນໄພຮ່ວມ; ເປັນຜູ້ບໍ່ມີສິດໄດ້ຮັບສິດທິປະໂຫຍດດ້ານການດູແລສຸຂະພາບຂອງລັດຖະບານ; ແລະກົງກັບເງື່ອນໄຂທີ່ມີສິດໄດ້ຮັບນະໂຍບາຍທາງດ້ານການເງິນຕາມເງື່ອນໄຂທີ່ໄດ້ອະທິບາຍໄວ້ໃນນະໂຍບາຍຂອງການຊ່ວຍເຫຼືອທາງດ້ານການເງິນຂອງພວກເຮົາ. ເງື່ອນໄຂຂອງທ້ອງຖິ່ນ ຫຼື ການຍົກເວັ້ນອາດຈະນຳໃຊ້ຕາມທີ່ໄດ້ອະທິບາຍເພີ່ມເຕີມໃນນະໂຍບາຍທາງດ້ານການເງິນຂອງພວກເຮົາ. ຄົນເຈັບເປັນ ຄາດວ່າຈະຮ່ວມມືກັບຂັ້ນຕອນການທີ່ໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນ ຫຼື ການເຂົ້າເຖິງແຫຼ່ງການຊຳລະອື່ນໆ, ແລະປະກອບສ່ວນເຂົ້າໃນຄ່າໃຊ້ຈ່າຍໃນການດູແລຂອງພວກເຂົາໂດຍອີງໃສ່ຄວາມສາມາດໃນການຊຳລະຂອງເຂົາເຈົ້າ. ບຸກຄົນທີ່ໄດ້ຊື້ປະກັນໄພສຸຂະພາບກໍ່ຄາດວ່າຈະຖືກປະຕິບັດເຊັ່ນດຽວກັນ, ເພື່ອຮັບປະກັນວ່າການເຂົ້າເຖິງການບໍລິການດ້ານສຸຂະພາບທີ່ເປັນສິດທິປະໂຫຍດຕໍ່ສຸຂະພາບໂດຍລວມຂອງພວກເຂົາເຊັ່ນດຽວກັນກັບການປົກປ້ອງຊັບສິນສ່ວນຕົວຂອງພວກເຂົາ.

## ວິທີການ ແລະ ເວລາໃດທີ່ຄວນຈະສະຫມັກຂໍການຊ່ວຍເຫຼືອທາງດ້ານການເງິນ?

ທ່ານສາມາດສະຫມັກໄດ້ໃນທຸກຈຸດໃນຊ່ວງລະຫວ່າງການດູແລຂອງທ່ານ ຫຼື ຮອບວຽນຂອງການເກັບກຳ. ເຖິງຢ່າງໃດກໍ່ຕາມ, ພວກເຮົາຂໍຊຸກຍູ້ໃຫ້ປະກອບໃບສະໝັກໃຫ້ຖ້ວນກ່ອນການນັດພົບ. ໃຫ້ການຊ່ວຍເຫຼືອແກ່ຄົນເຈັບ ສາມາດຊ່ວຍເຫຼືອທ່ານໃນການກຳນົດ ແລະ ຍື່ນຄຳຮ້ອງຂໍປະກັນໄພ ຫຼື ຊັບພະຍາກອນອື່ນໆ ແລະ ປະກອບໃບສະໝັກຂໍການຊ່ວຍເຫຼືອທາງດ້ານການເງິນ. ຖ້າທ່ານມີຍອດຄົງເຫຼືອຫຼັງຈາກບໍ່ມີທາງເລືອກການຄຸ້ມກັນອື່ນໆ, ທ່ານອາດຈະມີສິດໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນ. ການສະຫມັກສາມາດສະເໜີດ້ວຍຕົນເອງ, ຜ່ານທາງໂທລະສັບ: **dartmouth-hitchcock.org/patients-visitors/ financial-assistance**.

## ອັດສ່ວນຂອງການລຸດ

ຖ້າທ່ານບໍ່ຖືກກັບເງື່ອນໄຂໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນ, ທ່ານອາດຈະຍັງມີສິດໄດ້ຮັບສ່ວນຫຼຸດໃນນາມທີ່ບໍ່ມີປະກັນໄພ ຫຼື ສ່ວນຫຼຸດອື່ນໆຕາມນະໂຍບາຍຂອງພວກເຮົາ. ອັດຕາສ່ວນຫຼຸດເນື່ອງບໍ່ມີປະກັນໄພດັ່ງກ່າວນີ້ຖືກນຳໃຊ້ກ່ອນການຮຽກເກັບເງິນຄົນເຈັບ ແລະ ນຳໃຊ້ເພື່ອປັບປ່ຽນຈຳນວນຂອງການຊ່ວຍເຫຼືອດ້ານການເງິນ. ສ່ວນຫຼຸດທີ່ອີງໃສ່ "ນະໂຍບາຍດ້ານ Medicare ຄາດຫວັງໄວ້ລ່ວງໜ້າ" ຕາມທີ່ໄດ້ລະບຸໄວ້ພາຍໃຕ້ກົດລະບຽບການທີ່ນຳມາປະຕິບັດໃນມາດຕາ 501(r) ຂອງ ກົດໝາຍວ່າດ້ວຍລາຍຮັບພາຍໃນ. ອັດຕາສ່ວນຫຼຸດອາດຈະແຕກຕ່າງກັນໄປຕາມສະຖານະການ.

## ການຊ່ວຍເຫຼືອທາງດ້ານການເງິນຖືກກຳນົດຄືແນວໃດ?

ຈຳນວນການຊ່ວຍເຫຼືອທາງດ້ານການເງິນທີ່ທ່ານໄດ້ຮັບແມ່ນອີງໃສ່ລາຍຮັບລວມຍອດສຸດທິ ແລະ ຊັບສິນຂອງທ່ານເມື່ອທຽບກັບຄຳສັ່ງແນະນຳຂອງລັດຖະບານກາງວ່າດ້ວຍຄວາມທຸກຍາກ. ທ່ານຕ້ອງຄົບກັບເງື່ອນໄຂ: ຖ້າລາຍຮັບຂອງຄອບຄົວຂອງທ່ານໄດ້ປະມານ ຫຼື ຕ່ຳກວ່າ 300% ຂອງຂອບເຂດຄວາມທຸກຍາກທີ່ລັດຖະບານກາງກຳນົດ; ອີງໃສ່ກະຊວງສາທາລະນະສຸກ ແລະ ການບໍລິການມະນຸດແຫ່ງສະຫະລັດ ແລະ ສະບັບປັບປຸງໃນແຕ່ລະປີ; ຫຼື ຖ້າທ່ານເຊື່ອວ່າຊັບສິນຂອງທ່ານ, ສະພາບຄ່ອງ ແລະ ຊັບພະຍາກອນອື່ນໆທີ່ມີຢູ່ແມ່ນບໍ່ພຽງພໍທີ່ຈະກວມເອົາຄ່າໃຊ້ຈ່າຍໃນການດູແລສູຂະພາບຂອງທ່ານ. ຕາມການສະເໜີຂອງທ່ານ, ແບບຟອມສະໝັກຂໍການຊ່ວຍເຫຼືອທາງດ້ານການເງິນ ຫຼື ສຳເນົາຂໍນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນຈະຖືກສົ່ງຜ່ານທາງໄປສະນີໄປຍັງທ່ານໂດຍບໍ່ເສຍຄ່າ. ນອກຈາກນີ້, ເອກະສານເຫຼົ່ານີ້ ແລະ ບົດສະຫຼຸບຫຍໍ້ສະບັບດັ່ງກ່າວນີ້ຈະມີຢູ່ໃນເວັບໄຊທ໌ຂອງພວກເຮົາ, ທີ່ dartmouth-hitchcock.org/ patients-visitors/financial-assistance.

*ເອກະສານເຫຼົ່ານີ້ຍັງເຮັດເປັນພາສາດັ່ງຕໍ່ໄປນີ້: ພາສາສະເປັນ, ພາສາຝະລັ່ງ, ພາສາປອກຈຸຍການ, ພາສາຈີນ, ພາສາກະເຫຼັກ, ພາສາຫວຽດນາມ, ພາສາເນປານ, ພາສາອາລັບ, ພາສາລັດເຊຍ, ພາສາບອດສະເນຍ, ພາສາເກົາຫຼີ, ພາສາລາວ, ພາສາສູມາລີ, ພາສາສະວາຮີລີ, ແລະ ພາສາໄທ.*